| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດດໍາເນີນທຸລະກິດເຊົ່າສິນເຊື່ອ | |
| ປະເພດຂອງໃບອະນຸຍາດ | ໃບອະນຸຍາດດໍາເນີນທຸລະກິດ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| BoL-FISD-3 | 28.12.2017 | ກົມຄຸ້ມຄອງສະຖາບັນການເງິນ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າຫນ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | K - ການເຄື່ອນໄຫວດ້ານການເງິນ ແລະ ການປະກັນໄພ |
| ຈຸດປະສົງທີ່ຕ້ອງຂໍ ໃບອະນຸຍາດ | ເນື່ອງຈາກບໍລິສັດເຊົ່າສິນເຊື່ອເປັນໜຶ່ງໃນສະຖາບັນການເງິນ ທີ່ອາດສ້າງຄວາມສ່ຽງຕໍ່ສະຖຽນລະພາບທາງການເງິນຂອງປະເທດຊາດ ແລະ ສາທາລະນະຊົນ, ສະນັ້ນຈຶ່ງມີຄວາມຈໍາເປັນທີ່ຈະຕ້ອງຈັດການ ແລະ ຄຸ້ມຄອງການອອກອະນຸຍາດໃຫ້ບຸກຄົນທີ່ຈະລົງທຶນໃນທຸລະກິດປະເພດດັ່ງກ່າວ. |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ນິຕິບຸກຄົນທີ່ເຮັດສັນຍາເຊົ່າສິນເຊື່ອ (ສັນຍາທີ່ຜູ້ເຊົ່າເປັນຜູ້ກໍານົດຊັບ ແລະ ຄັດເລືອກຜູ້ສະໜອງ ແລະ ຜູ້ໃຫ້ເຊົ່າຈະເຮັດສັນຍາສະໜອງກັບຜູ້ສະໜອງ ແລະ ໃຫ້ເຊົ່າຊັບສິນດັ່ງກ່າວກັບ ຜູ້ເຊົ່າ ດ້ວຍການຊໍາລະຄ່າເຊົ່າ ແລະ ມີທາງເລືອກສຸດທ້າຍວ່າ ຜູ້ເຊົ່າຈະຊື້ຊັບ ຫລື ໃຫ້ເຊົ່າຕໍ່) ຢ່າງໜ້ອຍ 6 ຄັ້ງຕໍ່ປີ |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ແມ່ນແລ້ວ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | https://www.bol.gov.la/laoweb/index.php |
| ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່? | ແມ່ນແລ້ວ |
| ຄໍາເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ | 1. ພາຍຫລັງໄດ້ຮັບໃບອະນຸຍາດດໍາເນີນທຸລະກິດ, ຕ້ອງໄປແຈ້ງຂຶ້ນທະບຽນວິສາຫະກິດ ແລະ ທະບຽນອາກອນນໍາຂະແໜງການທີ່ກ່ຽວຂ້ອງ ໂດຍສອດຄ່ອງກັບກົດໝາຍ 2. ນັບຈາກວັນທີ 1 ມີນາ 2017 ຮອດວັນທີ 28 ກຸມພາ 2019, ກົມແມ່ນໂຈະຊົ່ວຄາວ ການອະນຸຍາດດໍາເນີນທຸລະກິດບໍລິສັດເຊົ່າສິນເຊື່ອ |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| ໄລຍະເວລາໃນການພິຈາລະນາຄຳຮ້ອງ ໃນການອອກໃບອະນຸຍາດ | 60 | |
| ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ | 1. ຕ້ອງສ້າງຕັ້ງວິສາຫະກິດໃນຮູບແບບບໍລິສັດຈຳກັດ ທີ່ມີຜູ້ຖືຮຸ້ນລິເລີ່ມຢ່າງໜ້ອຍ 2 ຂາຮຸ້ນຂຶ້ນໄປ ແຕ່ສູງສຸດບໍ່ໃຫ້ເກີນ 30 ຂາຮຸ້ນ, ຊຶ່ງໃນນັ້ນຜູ້ຖືຮຸ້ນຢ່າງໜ້ອຍ 1 ຄົນຕ້ອງມີປະສົບການທາງດ້ານບໍລິຫານການເງິນ 2. ສຳລັບ ຜູ້ລົງທຶນຕ່າງປະເທດ ທີ່ລົງທຶນ ຕ້ອງປະກອບທຶນຢ່າງໜ້ອຍບໍ່ໃຫ້ຫລຸດ 10% ຂອງທຶນທັງໝົດ ແລະ ສາມາດຖືຮຸ້ນ 100% ໄດ້ 3. ມີທຶນຈົດທະບຽນຕ່ຳສຸດ 500 ລ້ານກີບ 4. ຕ້ອງມີເອກະສານຢັ້ງຢືນຖານະການເງິນຂອງຜູ້ຖືຮຸ້ນທີ່ສະແດງໃຫ້ເຫັນຄວາມພຽງພໍຂອງທຶນ 5. ມີໂຄງປະກອບການຈັດຕັ້ງ ພ້ອມທັງກຳນົດຕຳແໜ່ງງານເປັນແຕ່ລະພະແນກຢ່າງຊັດເຈນ 6. ກໍລະນີເປັນຄົນຕ່າງປະເທດ ຕ້ອງມີເອກະສານຢັ້ງຢືນເຫັນດີຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງຂອງປະເທດຕົນ | |
| ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ? | ປະຕິເສດ ກໍລະນີ ຜູ້ຮ້ອງຂໍບໍ່ມີເງື່ອນໄຂຄົບຖ້ວນຕາມທີ່ກຳນົດ. | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| ໃບອະນຸຍາດມີກຳນົດອາຍຸ ຫລືບໍ່? | ໃບອະນຸຍາດມີອາຍຸນຳໃຊ້ ຈັກເດືອນ? |
| ບໍ່ມີ | 0 |
| ຂັ້ນຕອນ ແລະ ເງື່ອນໄຂສຳລັບການຕໍ່ອາຍຸໃບອະນຸຍາດ | ບໍ່ຕ້ອງມີການຕໍ່ອາຍຸໃບອະນຸຍາດ ແຕ່ສະຖາບັນການເງິນ ຕ້ອງໄດ້ເສຍຄ່າຄຸ້ມຄອງປະຈຳປີ |

| ຄ່າທຳນຽມ | | | | |
|---|---|---|---|---|
| ມີຄ່າທຳນຽມແບບຟອມຄຳ ຮ້ອງ ຫລືບໍ່? | ຄ່າບໍລິການວິຊາການ | ຄ່າທຳນຽມ | ຄ່າແບບຟອມຄຳຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
| ແມ່ນແລ້ວ | 0.00 | 5000000.00 | 0.00 | 5000000.00 |
| ຄຳເຫັນ | ອີງຕາມຂໍ້ຕົກລົງທະນາຄານແຫ່ງ ສປປ ລາວ ເລກທີ 926/ທຫລ, ລົງວັນທີ 11 ພະຈິກ 2015 - | | | |

| ຄ່າທຳນຽມ | |
|---|---|
| | ສຳລັບຄ່າຄົ້ນຄວ້າອອກໃບອະນຸຍາດແມ່ນ 0,5% ຂອງທຶນຈົດທະບຽນ |

| ຄ່າທຳນຽມການຕໍ່ອາຍຸ | | | | |
|---|---|---|---|---|
| ມີຄ່າທຳນຽມ ແບບຟອມ ຄຳຮ້ອງ ຂໍຕໍ່ອາຍຸ ຫລືບໍ່? | ຄ່າບໍລິການວິຊາການ | ຄ່າທຳນຽມ | ຄ່າ ແບບຟອມ ຄຳຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
| ແມ່ນແລ້ວ | 0.00 | 100000.00 | 0.00 | 100000.00 |
| **ຄຳເຫັນ** | ອີງຕາມຂໍ້ຕົກລົງທະນາຄານແຫ່ງ ສປປ ລາວ ເລກທີ 926/ທຫລ, ລົງວັນທີ 11 ພະຈິກ 2015 ບໍ່ແມ່ນຄ່າທຳນຽມການຕໍ່ອາຍຸ ແຕ່ແມ່ນຄ່າຄຸ້ມຄອງປະຈຳປີທີ່ຕ້ອງໄດ້ຈ່າຍ ພາຍໃນເດືອນມັງກອນ ຂອງແຕ່ລະປີ ຈຳນວນ 0.02% ຂອງຊັຍສິນສະເລ່ຍ (ພິຈາລະນາ ທຶນຈົດທະບຽນຂັ້ນຕ່ຳແມ່ນ 500 ລ້ານກີບ) | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| ຊື່ກົດລະບຽບ | ເລກທີ | ວັນທີ | ຄຳເຫັນ |
| ດຳລັດວ່າດ້ວຍ ການເຊົ່າສິນເຊື່ອ | 11/ນຍ | 18.02.1999 | ພາກທີ III ບໍລິສັດເຊົ່າສິນເຊື່ອ (ມາດຕາ 10 ຫາ ມາດຕາ 13) |
| ແຈ້ງການ ເລື່ອງ ການໂຈະຊົ່ວຄາວ ການອອກອະນຸຍາດດຳເນີນທຸລະກິດ ສະຖາບັນການເງິນ ຢູ່ ສປປ ລາວ | 95/ກຄສງ | 18.05.2017 | |
| ແຈ້ງການ ວ່າດ້ວຍ ເງື່ອນໄຂ ແລະ ການປະກອບເອກະສານ ຂໍອະນຸຍາດດຳເນີນທຸລະກິດ ແລະ ການຂະຫຍາຍສາຂາຂອງ ບໍລິສັດ ເຊົ່າສິນເຊື່ອ | 1038/ກຄສງ | 24.07.2014 | |
| ຂໍ້ຕົກລົງວ່າດ້ວຍ ຄ່າທຳນຽມ, ຄ່າບໍລິການໃນການຂໍອະນຸຍາດດຳເນີນທຸລະກິດ ແລະ ຄ່າຄຸ້ມຄອງປະຈຳປີ ຂອງສະຖາບັນການເງິນ | 926/ທຫລ | 11.11.2015 | ມາດຕາ 2 ຫາ ມາດຕາ 4 |

| ເອກະສານປະກອບ |
|---|
| **ຊື່ເອກະສານ** |
| ບົດວິພາກເສດຖະກິດເຕັກນິກ |
| ສັນຍາເຊົ່າທີ່ຕັ້ງສໍານັກງານ |
| ໃບມອບສິດໃຫ້ຜູ້ຕາງໜ້າມາພົວພັນວຽກກໍລະນີຜູ້ສະເໜີບໍ່ສາມາດມາພົວພັນດ້ວຍຕົວເອງ |
| ໃບຢັ້ງຢືນການຊໍາລະຄ່າທໍານຽມ |
| ໃບຢັ້ງຢືນທີ່ຢູ່ |
| ແຜນວາດທີ່ຕັ້ງຂອງວິສາຫະກິດ |
| ໃບຢັ້ງຢືນວຸດທິການສຶກສາ |
| ສໍາເນົາພາດສະປອດຂອງອໍານວຍການ |
| ໃບຢັ້ງຢືນການເຄື່ອນໄຫວບັນຊີຈາກທະນາຄານທຸລະກິດ ສໍາລັບຜູ້ຖືຮຸ້ນ |
| ສໍາເນົາບັດປະຈໍາຕົວ/ສໍາມະໂນຄົວຂອງອໍານວຍການ |
| ໃບແຈ້ງໂທດ |
| ໃບຊີວະປະຫວັດຂອງຜູ້ອໍານວຍການ |
| ມະຕິກອງປະຊຸມຂອງຜູ້ຖືຮຸ້ນສ້າງຕັ້ງ |
| ສັນຍາຮ່ວມທຶນ, ສັນຍາສ້າງຕັ້ງ |
| ກົດລະບຽບການດໍາເນີນງານພາຍໃນ |
| ໃບຢັ້ງຢືນຖານະທາງດ້ານການເງິນແລະຊັບສິນ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| **ປີ** | **ອອກໃໝ່** | **ຕໍ່ອາຍຸ** |
| 2016 | 0 | 29 |